**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ຫ້ອງການ

ເລກທີ...1778.../ຫກ.ສລດ

ນະຄອນຫຼວງວຽງຈັນ, ວັນທີ 15 ກັນຍາ 2025

## ໜັງສືແຈ້ງເຊີນປະມູນ

1. ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ຮັບອະນຸມັດງົບປະມານ ຈັດຊື້-ຈັດຈ້າງ ການໂອນຍ້າຍ ແລະ ຂະຫຍາຍ ລະບົບຈົດໝາຍເອເລັກໂຕຣນິກຂອງລັດຖະບານ (e-Mail): ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິ ເໝາະສົມທີ່ດຳເນີນກິດຈະການດ້ານການສຳຫຼວດ, ຕິດຕັ້ງ ແລະ ໂອນຍ້າຍ ລະບົບຈົດໝາຍເອເລັກໂຕຣນິກ ຫຼື ລະບົບຊອບແວທີ່ໃກ້ຄຽງ ເຂົ້າຮ່ວມປະມູນ;
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກ ບໍລິສັດທີ່ມີຄຸນວຸດທິເໝາະສົມ, ທີ່ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມ ກົດໝາຍທີ່ກ່ຽວພັນກັບການພັດທະນາລະບົບຈົດໝາຍເອເລັກໂຕຣນິກ ຫຼື ລະບົບຊອບແວທີ່ໃກ້ຄຽງ;
4. ບໍລິສັດໃດ ທີ່ຕ້ອງການເຂົ້າຮ່ວມປະມູນແມ່ນສາມາດຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ ກະຊວງເຕັກ ໂນໂລຊີ ແລະ ການສື່ສານ (ສີສະເກດ), ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ເບີໂທຕິດຕໍ່: 021 316600, 020 59398896, 020 77028888 ເລີ່ມຂາຍຊອງແຕ່ວັນທີ 15 ກັນຍາ 2025 ເຖິງວັນທີ 13 ຕຸລາ 2025 (ໃນໂມງລັດຖະການ), ໃນລາຄາ 3,500,000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ໄດ້ມີການສົ່ງຄືນ ແລະ ວິທີ ການຊຳລະຕ້ອງຈ່າຍເປັນເງິນສົດ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 15 ຕຸລາ 2025 ທີ່ຫ້ອງ 208 ຊັ້ນ 2, ກະຊວງເຕັກໂນໂລຊີ ແລະ ການສື່ສານ (ເຂດສີສະເກດ), ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳ ນົດໄວ້ແມ່ນຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 09:00 ໂມງ ຂອງ ວັນທີ 15 ຕຸລາ 2025 ໂດຍສ່ອງໜ້າຄະນະການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ທຸກໆຊອງປະມູນຕ້ອງປະກອບການຄ້ຳປະກັນການປະມູນ ດ້ວຍເງິນສົດ, ໜັງສືຄ້ຳປະກັນອອກໂດຍທະນາຄານ, ເຊັກ(ວີຊາ) ບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບໍລິສັດຫ້າງຮ້ານທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຫົວໜ້າຫ້ອງການ

ກະຊວງເຕັກໂນໂລຊີ ແລະ ການສື່ສານ ຫ້ອງການ

**ຈັນອິບ ສີຫາລາດ**

ຕິດຕໍ່ພົວພັນ:

ນ.ຂັນທະລາ ພົມມະສີ 020 7702 8888